ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-------=====0000=====-------

ແຂວງ ຊຽງຂວາງ — ເລກທີ: 09 /ຈຂ-ຊຂ

ສຳນັກງານປົກຄອງແຂວງ — ລົງວັນທີ 04/9/2015

# ຄຳສັ່ງແນະນຳ

## ວ່າດ້ວຍການແກ້ໄຂການນຳໃຊ້ພາຫະນະທຸກປະເພດ ທີ່ນຳເຂົ້າ ບໍ່ຖືກຕ້ອງຕາມກົດໝາຍແລະລະບຽບການ ພາຍໃນແຂວງຊຽງຂວາງ

ເຖິງ : ທ່ານ ເຈົ້າເມືອງ ທຸກໆເມືອງ, ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ, ບັນດາ ບໍລິສັດ, ລັດວິສະຫະກິດ, ບຸກຄົນ, ນິຕິບຸກຄົນ, ຕະຫຼອດຮອດພະນັກງານ, ທະຫານຕຳຫຼວດ, ພໍ່ແມ່ປະຊາຊົນ ແລະ ຊາວຕ່າງດ້າວ ພາຍໃນແຂວງຊຽງຂວາງ.

- ອີງຕາມ ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 11/05/2009 ວ່າດ້ວຍ ການກວດກາ ແລະ ມາດຕະການ ຕໍ່ຜູ້ນຳເຂົ້າ ຍານພາຫະນະ ທຸກປະເພດ ທີ່ ບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ.
- ອີງຕາມ ຂໍ້ຕົກລົງ ເຈົ້າແຂວງໆ ຊຽງຂວາງ ສະບັບເລກທີ 147/ຈຂ-ຊຂ, ລົງວັນທີ 23/02/2015 ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳ ແລະ ອະນຸກຳມະການ ແກ້ໄຂ ພາຫະນະ ນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ ບໍ່ຖືກ ເປົ້າໝາຍ.
- ອີງຕາມ ແຈ້ງການແນະນຳ ຂອງກະຊວງການເງິນ ສະບັບເລກທີ 2070/ກງ , ລົງວັນທີ 25/06/2015. ວ່າດ້ວຍການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ ແລະ ການແຈ້ງເສັຍພາສີ ປ່ຽນກຳມະສິດ ທີ່ນຳເຂົ້າໃນລະບອບຍົກເວັ້ນ ແລະ ງົດເກັບພາສີ ຂອງບັນດາໂຄງການລົງທຶນຕ່າງໆ.

ເພື່ອເຮັດໃຫ້ການແກ້ໄຂການນຳໃຊ້ພາຫະນະທຸກປະເພດທີ່ບໍ່ຖືກຕ້ອງຂອງບຸກຄົນ,ນິຕິບຸກຄົນ ແລະ ການ ຈັດຕັ້ງທຸກພາກສ່ວນພາຍໃນແຂວງຊຽງຂວາງໃຫ້ຖືກຕ້ອງແລະ ສອດຄ່ອງ ກັບລະບຽບ - ກົດໝາຍ ທີ່ກຳນົດໄວ້ ແລະ ເປັນການເກັບກູ້ລາຍຮັບເຂົ້າງົບປະມານຂອງລັດໃຫ້ທັນໃນ 02 ເດືອນທ້າຍ ສົກ ງົບປະມານ 2014-2015 ຕາມຕົວເລກແຜນການ ທີ່ສະພາແຫ່ງຊາດຮັບຮອງ.

### ເຈົ້າແຂວງ ໆຊຽງຂວາງ ອອກຄຳສັ່ງ ແນະນຳ ດັ່ງນີ້:

1. ໃຫ້ ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ ກ່າວມາຂ້າງເທິງ ທີ່ໄດ້ນຳໃຊ້, ມີໄວ້ໃນ ຄອບ

ຄອງ ປະເພດພາຫະນະ ຕ່າງໆ ເຊັ່ນ: ລົດຈັກ, ລົດເກັ໋ງ, ລົດກະບະ, ລົດຈິບ, ລົດຂົນສົ່ງ,ລົດກົນຈັກໜັກ, ລົດທີ່ຕິດປ້າຍລັດ ບໍລິຫານ, ປ້າຍວິສະຫະກິດ, ປ້າຍ 1 %, ປ້າຍຊົ່ວຄາວ, ປ້າຍເຫຼືອງ ເອກະຊົນລາວ ແລະ ອື່ນໆ ເຊິ່ງພາຫະນະດັ່ງກ່າວ ຍັງບໍ່ທັນເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ກຳນົດໄວ້ທີ່ໄດ້ແຈ້ງ ຫຼື ຍັງບໍ່ທັນໄດ້ແຈ້ງ ກັບ ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ໃຫ້ມາພົວພັນ ຄະນະກຳມະການ ແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ ຂອງແຂວງ ປະຈຳຢູ່ ຫ້ອງການ ກອງກວດກາພາສີ ແຂວງຊຽງຂວາງ ຊັ້ນລຸ່ມ ຕຶກ ພະແນກການເງິນ ແຂວງ ເລີ້ມແຕ່ວັນທີ 25 ສິງຫາ 2015 ເປັນຕົ້ນໄປ ຫຼື ຢູ່ບັນດາເມືອງ ທີ່ ຄະນະກຳມະການ ແກ້ໄຂຈະລົງໄປ.

2. ສຳລັບມາດຕະການແກ້ໄຂ ພາຫະນະທຸກປະເພດ ທີ່ ນຳໃຊ້ບໍ່ຖືກຕ້ອງ ແຕ່ລະກໍລະນີ ແມ່ນໃຫ້ປະຕິບັດ ຕາມ ເນື້ອໃນ ແຈ້ງການ ແນະນຳຂອງກະຊວງການເງິນ ສະບັບເລກທີ 2070/ກງ, ລົງວັນທີ 25 / 06 / 2015 ຢ່າງເຂັ້ມງວດ.

3.ມອບໃຫ້ຄະນະກຳມະການແກ້ໄຂລົດນຳບໍ່ຖືກເຂົ້າຕ້ອງຂອງແຂວງທີ່ໄດ້ຮັບການແຕ່ງຕັ້ງຕາມຂໍ້ຕົກລົງ ຂອງເຈົ້າແຂວງ ສະບັບເລກທີ 147/ຈຂ-ຊຂ ລົງວັນທີ 23/02/2015, ຄົ້ນຄ້ວາຕົກລົງເປັນເອກະພາບ ການຈັດຕັ້ງປະຕິບັດ ຕົວຈິງ ຢູ່ ບັນດາເມືອງ ເພື່ອອຳນວຍຄວາມສະດວກ ໃຫ້ ຜູ້ນຳໃຊ້ ຫຼື ເຈົ້າຂອງພາຫະນະ ພາຍຫຼັງເສັຍພາສີ ແລະ ພັນທະອື່ນ ຢ່າງຄົບຖ້ວນແລ້ວ ໃຫ້ອອກທະບຽນ ແລະ ປ້າຍນຳໃຊ້ ຢ່າງຖືກຕ້ອງ ກັບທີ່.

4. ມອບໃຫ້ເຈົ້າໜ້າທີ່ ຕຳຫຼວດ ຈະລາຈອນ ສົມທົບກັບເຈົ້າໜ້າທີ່ ກ່ຽວຂ້ອງ ແລະ ອຳນາດການປົກຄອງ ທຸກຂັ້ນ ດຳເນີນການກວດກາ ພາຫະນະ ທີ່ນຳໃຊ້ ບໍ່ຖືກຕ້ອງ ຕາມລະບຽບ ກົດໝາຍ ຕາມເສັ້ນທາງໃນທົ່ວແຂວງ.ຖ້າ ພົບເຫັນ ພາຫະນະ ທີ່ ກ່າວມານັ້ນ ໃຫ້ແນະນຳ ຜູ້ນຳໃຊ້ ຫຼື ເຈົ້າຂອງ ພາຫະນະມາເສັຍພາສີ ແລະ ພັນທະອື່ນໃຫ້ຄົບ ຖ້ວນ ນຳ ຄະນະກຳມະການ ແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ ທີ່ຈະລົງ ຈັດຕັ້ງປະຕິບັດຕົວຈິງຢູ່ບັນດາ ເມືອງ.

5. ມອບໃຫ້ເຈົ້າເມືອງ, ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ, ບັນດາບໍລິສັດ, ລັດວິສະຫະກິດ , ບຸກຄົນ,ນິຕິບຸກຄົນ,ອົງການປົກຄອງທ້ອງຖິ່ນທຸກຂັ້ນເອົາໃຈໃສ່ ແນະນຳ ປຸກລະດົມ ພະນັກງານ , ທະຫານ , ຕຳຫຼວດ ແລະ ພໍ່ແມ່ປະຊາຊົນ ທີ່ໄດ້ນຳໃຊ້ ແລະ ມີໄວ້ຄອບຄອງ ພາຫະນະທຸກປະເພດ ທີ່ ບໍ່ຖືກຕ້ອງ ໃຫ້ມາເສັຍພາສີແລະ ພັນທະອື່ນໆ ທີ່ ຄະນະກຳມະການ ລົງແກ້ໄຂ ຢູ່ບັນດາເມືອງຕາມກຳນົດເວລາທີ່ກຳນົດໄວ້ໃນຂໍ້1 ຂ້າງເທິງ.

6. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຄວາມຫຍຸ້ງຍາກໃຫ້ລາຍງານຂໍຄຳເຫັນນຳແຂວງ ເພື່ອຂໍທິດຊີ້ນຳ ໃນການແກ້ໄຂບັນຫາ ໃຫ້ທັນເວລາ.

ດັ່ງນັ້ນ ; ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ພ້ອມກັນ ຈັດຕັ້ງປະຕິບັດ ຕາມ ຄຳສັ່ງ ແນະນຳ ສະບັບນີ້ ຢ່າງເຂັ້ມງວດ.

ຮອງເຈົ້າແຂວງໆຊຽງຂວາງ

ບົວສອນ ສີນວນທອງ

ບ່ອນນຳສົ່ງ :
- ບັນດາເມືອງ ເພື່ອຊາບ 01 ສະບັບ.
- ບັນດາພະແນກ ເພື່ອຊາບ 01 ສະບັບ.
- ກອງບັນຊາການ ປກສ,ປກຊ ເພື່ອຊາບ 01 ສະບັບ.
- ການຈັດຕັ້ງສັງຄົມ ແຈ້ງອອກ ວິທະຍຸ-ໂທລະພາບ 01 ສະບັບ
- ເກັບມ້ຽນ 01 ສະບັບ.